# ການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງ

*ວົງຄໍາໃສ ຈິດຕະວົງ[1], ຄໍາແສງ ທະລັງສີ[2], ສອນເພັດ ສີສຸລາດ[3], ພູມໃຈ ວົງວິໄລ[4]*

*ສາຂາວິຊາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລ ຈໍາປາສັກ.*

**ບົດຄັດຫຍໍ້**

ຈຸດປະສົງຂອງການຄົ້ນຄວ້ານີ້ເພື່ອ: 1) ສຶກສາສະພາບການບໍລິຫານຫຼັກສູດໃນໂຮງຮຽນມັດທະຍົມສົມບູນໃນແຂວງເຊກອງ. 2) ເພື່ອປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນຕໍ່ກັບການບໍລິຫານຫຼັກສູດ ຂອງໂຮງຮຽນມັດທະຍົມສົມບູນ ໃນແຂວງເຊກອງ ໂດຍຈໍາແນກຕໍາແໜ່ງ, ວຸດທິການສຶກສາ, ປະສົບການເຮັດວຽກ ແລະ ທີ່ຕັ້ງຂອງໂຮງຮຽນ. 3) ເພື່ອສຶກສາແນວທາງ ແລະ ຂໍ້ສະເໜີແນະກ່ຽວກັບການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນໃນແຂວງເຊກອງ. ກຸ່ມຕົວຢ່າງໃນການສຶກສາໃນຄັ້ງນີ້ ແມ່ນກຸ່ມຂອງຜູ້ບໍລິຫານ ຈໍານວນ 38 ຄົນ ແລະ ຄູສອນ ຈໍານວນ 145 ຄົນ ໃນໂຮງຮຽນມັດທະຍົມສົມບູນ ພາຍໃນ ແຂວງເຊກອງ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີແມ່ນໃຊ້ແບບສອບຖາມ. ການວິເຄາະຂໍ້ມູນແມ່ນນໍາໃຊ້ໂປຣແກຣມສໍາເລັດຮູບ (SPSS).

ຜົນການຄົ້ນຄວ້າພົບວ່າ:

1. ສະພາບການບໍລິຫານຫຼັກສູດພາຍໃນໂຮງຮຽນມັດທະຍົມສົມບູນຢູ່ແຂວງເຊກອງພົບວ່າ:

ດ້ານການກະກຽມຫຼັກສູດ: ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນຫຼັກສູດທີ່ນໍາມາໃຊ້ໄດ້ກໍານົດວິທີການວັດປະເມີນຜົນໄວ້ຢ່າງຊັດເຈນ. ສ່ວນຂໍ້ທີ່ມີຄ່າສະເລ່ຍຕໍ່າສຸດແມ່ນ ຜູ້ບໍຫານ-ຄູສອນ ແລະ ບຸກຄະລາກອນໃນຊຸມຊົນມີສ່ວນຮ່ວມໃນການກໍານົດມາດຕະຖານແລະເນື້ອໃນການຮຽນຮູ້ຂອງແຕ່ລະວິຊາ.

ການກໍານົດແຜນການບໍລິຫານຫຼັກສູດ: ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນຄູມີສ່ວນຮ່ວມໃນການວາງແຜນການ,ການແນະນໍາດ້ານແນວຄິດຄຸນສົມບັດແລະພຶດຕິກໍາໃຫ້ແກ່ນັກຮຽນ. ສ່ວນທີ່ມີຄ່າສະເລ່ຍຕໍ່າສຸດແມ່ນ ມີການວາງແຜນໃຊ້ພູມປັນຍາທ້ອງຖິນທີ່ມີປະໂຫຍດຕໍ່ການຮຽນຮູ້ຂອງນັກຮຽນ.

ດໍາເນີນການໃຊ້ຫຼັກສູດ: ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນຢູ່ໃນລະດັບຫຼາຍເຊິ່ງໄດ້ແກ່ ມີການຈັດກິດຈະກໍາທີ່ສົ່ງເສີມໃຫ້ນັກຮຽນເກີດຄວາມຮັກໃນດ້ານສິລະປະ ກິລາ ແລະ ການອອກແຮງງານ. ສ່ວນຂໍ້ທີ່ມີຄ່າສະເລ່ຍຕໍ່າສຸດໄດ້ແກ່ເຊີນຜູ້ມີຄວາມຮູ້ທາງພູມປັນຍາທ້ອງຖິ່ນແລະວິທະຍາກອນທ້ອງຖິ່ນມາຮ່ວມຈັດກິດຈະກໍາການຮຽນຮູ້ສໍາລັບນັກຮຽນ.

ການນິເທດ, ຕິດຕາມ,ແລະ ປະເມີນຜົນ: ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນມີການປະເມີນຜົນການໃຊ້ຫຼັກສູດໃນທຸກພາກຮຽນ. ສ່ວນຂໍ້ທີ່ມີຄ່າສະເລ່ຍຕໍ່າສຸດແມ່ນພໍ່ແມ່, ຜູ້ປົກຄອງ ແລະຊຸມຊົນເຂົ້າມາມີສ່ວນຮ່ວມກິດຈະກໍາການພັດທະນາຄຸນນະພາບການຮຽນ-ການສອນຂອງໂຮງຮຽນ.

---

[1] *ນັກສຶກສາປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລ ຈໍາປາສັກ.*

[2] *ມະຫາວິທະຍາໄລແຫ່ງຊາດລາວ*

[3] *ຄະນະສຶກສາສາດ ມະຫາວິທະຍາໄລ ຈໍາປາສັກ.*

[4] *ຄະນະສຶກສາສາດ ມະຫາວິທະຍາໄລ ຈໍາປາສັກ.*

**2.** ຜົນການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນຕໍ່ການປະຕິບັດການບໍລິຫານຫຼັກສູດ ໂຮງຮຽນມັດທະຍົມສົມບູນໃນແຂວງເຊກອງໂດຍ ຈໍາແນກຕາມຕໍາແໜ່ງພົບວ່າ ບໍ່ແຕກຕ່າງກັນ. ຈໍາແນກຕາມວຸດທິການສຶກສາພົບວ່າ: ຜູ້ທີ່ຈົບການສຶກສາລະດັບ ຊັ້ນສູງ ແລະ ປະລິນຍາຕີ ແມ່ນມີຄວາມຄິດເຫັນທີ່ແຕກຕ່າງກັນ. ຈໍາແນກ
ຕາມປະສົບການເຮັດວຽກພົບວ່າ: ມີຄວາມຄິດເຫັນບໍ່ແຕກຕ່າງກັນ ແລະ ຈໍາແນກຕາມທີ່ຕັ້ງຂອງໂຮງຮຽນພົບວ່າ: ໂດຍລວມແມ່ນມີຄວາມຄິດເຫັນບໍ່ແຕກຕ່າງກັນ.

3. ແນວທາງ ແລະ ຂໍ້ສະເໜີແນະກ່ຽວກັບການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນໃນແຂວງເຊກອງພົບວ່າ: ຜູ້ບໍລິຫານ ແລະ ຄູສອນ ຄວນ ສ້າງແຜນປັບປຸງ ແລະ ພັດທະນາຫຼັກສູດມັດທະຍົມສົມບູນ ໂດຍສະເພາະດ້ານການກວດກາ, ຕິດຕາມ ແລະ ປະເມີນຜົນຫຼັກສູດໃນແຕ່ລະໄລຍະ; ຜູ້ບໍລິຫານຄວນມີການເຜີຍແຜ່ປະຊາສໍາພັນເພື່ອສ້າງຄວາມຮັບຮູ້, ຄວາມເຂົ້າໃຈ ໃຫ້ແກ່ຜູ້ປົກຄອງ, ຊຸມຊົນໃຫ້ເຫັນຄວາມສໍາຄັນໃນການປະຕິບັດຫຼັກສູດ; ໂຮງຮຽນຄວນຈັດໃຫ້ມີສື່ການຮຽນຮູ້ນະວັດຕະກໍາ, ແຫຼ່ງການຮຽນຮູ້ ແລະ ເທັກໂນໂລຊີ ທາງການສຶກສາໃຫ້ພຽງພໍຕາມຄວາມຕ້ອງການ; ໂຮງຮຽນຄວນເຊີນຜູ້ມີຄວາມຮູ້ພູມປັນຍາທ້ອງຖິ່ນ ແລະ ວິທະຍາກອນທ້ອງຖິ່ນມາຮ່ວມຈັດກິດຈະກໍາການຮຽນຮູ້ສໍາລັບນັກຮຽນ ແລະ ຄວນຈັດໃຫ້ມີການສຶກສາ,ວິທີການເພື່ອໃຫ້ ພໍ່ແມ່, ຜູ້ປົກຄອງເດັກ ແລະ ຊຸມຊົນເຂົ້າມາມີສ່ວນຮ່ວມໃນກິດຈະກໍາພັດທະນາຄຸນນະພາບການຮຽນ-ການສອນ.

**ຄໍາສັບສໍາຄັນ:** ການບໍລິຫານຫຼັກສູດ, ຜູ້ບໍລິຫານ, ຄູສອນ

# CURRICULUM ADMINISTRATION OF SECONDARY SCHOOLS IN SEKONG PROVINCE

**Abstract**

The purposes of this research were: 1) to study the state of curriculum management in Secondary Schools in Sekong Province. 2) To compare the opinions of administrators and teachers to the curriculum management of Secondary Schools in Sekong province by distinguishing the position, Education qualification, work experience and location of the school. 3) To study guidelines and recommendations regarding the administration of Secondary School curriculum in Sekong Province. The sample group in this study was a group of 38 administrators and 145 teachers in secondary schools in Sekong province. The tool used in this research is questionnaire. The data analysis is done using SPSS software.

The result of this study found:

**1.** The state of curriculum management within comprehensive secondary schools in Sekong Province found:

In term of Curriculum preparation found that the item that is used to define the evaluation method clearly is highest average value. Even so, Administrators-teachers and community personnel are involved in determining standards and learning content for each subject is the lowest average value.

In trem of Curriculum management plan determination found that the item with the highest average value is the teacher involved in planning, the guidance of thinking, qualities and behavior to the students. Although, the lowest average value is the plan to use local knowledge sources that are beneficial to the students' learning.

In trem of Proceed to use the course found that the item with the highest average value is that the teacher is involved in planning, organizing community social activities that provide for the needs and inculcate the awareness of customs for students. However, the item with the lowest average value is planned to use local knowledge resources that are useful for student learning.

In term of Guidance, monitoring, and evaluation found that the item with the highest average value are evaluations of course use in all semesters. However, the item with the lowest average value is parents, guardians and the community participating in the activities of developing the quality of teaching and learning of the school.

2. The result of comparing the opinions of administrators and teachers on the implementation of curriculum administration in Sekong province by division according to position found no

difference. According to educational qualifications, it was found that: those who graduated from high school and bachelor's degree were different opinions. Based on work experience, it was found that there were not different opinion, and based on the location of the school, it was found that overall there were not different opinion.

3. Guidelines and recommendations regarding the administration of secondary school curriculum in Sekong province found that: Administrators and teachers should create a plan to improve and develop secondary education curriculum, especially in terms of inspection, monitoring and evaluation of the curriculum in each period; Administrators should spread public relations to create awareness and understanding for parents and the community to see the importance of implementing the curriculum; The school provides enough innovative learning media, learning resources and educational technology as needed; Schools should invite local intellectuals and local scholars to organize learning activities for students and should provide education, methods for parents, guardians and the community to participate in activities to develop the quality of teaching and learning.

**Key words:** curriculum administration, administrators, teachers

**1. ພາກສະເໜີ**

ສັງຄົມໂລກໃນສະພາບປະຈຸບັນນີ້ເປັນຍຸກໂລກາວິວັດເຮັດໃຫ້ແຕ່ລະພາກພື້ນຂອງໂລກມີການປ່ຽນແປງລວມທັງດ້ານ ການເມືອງ,ເສດຖະກິດ - ສັງຄົມ, ວັດທະນະທຳການສຶກສາ ແລະ ເຕັກໂນໂລຊີຢ່າງເຕັມຕົວ ແລະ ເປັນຍຸກ ທີ່ມີການປະຕິວັດວິທະຍາສາດເຕັກໂນໂລຊີກ້າວກະໂດດກາຍມາເປັນຍຸກຂໍ້ມູນຂ່າວສານທີ່ບໍ່ມີພົມແດນເອີ້ນ ວ່າ " ຍຸກໂລກາພິວັດ" ເຊິ່ງມີຄວາມສຳຄັນຢ່າງຍິ່ງຕໍ່ການປ່ຽນແປງວິຖີການດຳລົງຊີວິດຂອງມວນມະນຸດຢູ່ໃນສັງຄົມ. ການປ່ຽນແປງວິຖີການດຳລົງຊີວິຂອງມະນຸດໄດ້ມີອິດທິພົນສົ່ງຜົນຕໍ່ລະບົບການສຶກສາເພື່ອ ພັດທະນາຊັບພະຍາກອນມະນຸດໃຫ້ມີການປັບຕົວເຂົ້າໃນການດຳລົງຊີວິດໃນຍຸກສະໄໝໃໝ່ຢ່າງກົມກຽວ. ອີກດ້ານໜຶ່ງສະພາບການຂອງສາກົນທີ່ເຄີຍມີການແຂ່ງຂັນ ແລະ ມີຂໍ້ຂັດແຍ່ງຢ່າງຮຸນແຮງກໍ່ໄດ້ກາຍມາເປັນທ່າອ່ຽງແຫ່ງການຮ່ວມມື ແລະ ເຊື່ອມໂຍງເຂົ້າກັນ. ເຊິ່ງສ້າງໂອກາດທີ່ດີໃນການພັດທະນາແຕ່ລະປະເທດ. ທ່າອ່ຽງລວມຂອງການພັດທະນາເສດຖະກິດ - ສັງຄົມທີ່ມີການອີງໃສຊັບພະຍາກອນທຳມະຊາດນັ້ນໄດ້ ຫຼຸດຜ່ອນລົງແຕ່ຈະຕ້ອງອີງໃສ່ມັນສະໝອງ ແລະ ສະຕິປັນຍາຂອງຄົນເປັນສິ່ງສຳຄັນ. ຈາກນັ້ນບັນດາປະເທດ ໃນໂລກຈຶ່ງສຸມໃສ່ພັດທະນາຊັບພະຍາກອນມະນຸດໂດຍຖືເອົາວຽກງານການສຶກສາເປັນປັດໄຈຕົ້ນຕໍໃນການ ສ້າງຄົນໃຫ້ມີຄວາມຮູ້, ມີຄຸນສົມບັດ, ມີສຸຂະພາບແຂງແຮງ ແລະ ມີຄວາມຈະເລີນທາງດ້ານຈິດໃຈສາມາດ ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຍີເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. (ກົຕິມາ ປຣິດີດົກ, 2532:48)

ຫຼັກສູດການຮຽນ-ການສອນແຕ່ລະຫຼັກສູດແມ່ນມີຄວາມສຳຄັນ ໃນການຈັດຕັ້ງການຮຽນການສອນ ແລະ ປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມຮູ້ຄວາມສາມາດ ແລະ ມີຄຸນນະພາບສອດຄ່ອງກັບການສຶກສາໃນໄລຍະໃໝ່,ເຊິ່ງໃນໄລຍະຜ່ານມາກະຊວງສຶກສາທິການ ແລະ ກິລາ ໄດ້ມີການຄົ້ນຄ້ວາຫຼັກສູດຕ່າງໆເພື່ອມາພັດທະນາການສຶກສາໃຫ້ມີບົດບາດຂະຫຍາຍຕົວດີກວ່າເກົ່າ. ສະນັ້ນ ເພື່ອເປັນການພັດທະນາຂະແໜງການສຶກສາໃຫ້ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສັງຄົມໃນໄລຍະໃໝ່ ແລະ ເປົ້າໝາຍສະຫະສະວັດແຫ່ງການພັດທະນາ, ແຜນການສຶກສາເພື່ອທຸກຄົນ. ກະຊວງສຶກສາທິການ ແລະ ກິລາຈິ່ງພະຍາຍາມພັດທະນາຫຼັກສູດການຮຽນ-ການສອນໃນສົກຮຽນ2013-2014ໃຫ້ມີຄຸນນະພາບເທົ່າທຽມກັບພາກພື້ນກໍຄືສາກົນ.

ອີງຕາມແຜນພັດທະນາການສຶກສາ ແລະ ກິລາສໍາຫຼັບສົກປີ 2013-2014 ແມ່ນການສືບຕໍ່ປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ,ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VII, ແຜນຍຸດທະສາດການປະຕິຮູບລະບົບການສຶກສາໄລຍະ 2 ຂອບການພັດທະນາການສຶກສາ ແລະ ແຜນພັດທະນາການສຶກສາເພື່ອທຸກຄົນ, ເປົ້າໝາຍສະຫະສະວັດແຫ່ງການພັດທະນາ, ການແກ້ໄຂບັນຫາຂໍ້ຄົງຄ້າງ ແລະ ສິ່ງທ້າທາຍໃນການພັດທະນາການສຶກສາ - ກິລາໃນສົກຮຽນຜ່ານມາເພື່ອພັດທະນາຊັບພະຍາກອນມະນຸດໃຫ້ສອດຄ່ອງກັບຍຸດທະສາດແຫ່ງການພັດທະນາ. ສະນັ້ນຂະແໜງການສຶກສາ - ກິລາຈິ່ງໄດ້ກຳນົດຄາດໝາຍ ແລະ ວຽກງານຈຸດສຸມຕາມ 3 ແຜນງານໃຫຍ່, ໃນນັ້ນແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງເປັນອີກວຽກງານທີ່ຈະໄດ້ປັບປຸງຫລັກສູດໃນສາຍຕ່າງໆໃຫ້ສອດຄ່ອງກັບການສຶກສາໃນໄລຍະໃໝ່ເຊັ່ນຫຼັກສູດສາຍສາມັນແມ່ນຈະໄດ້ສ້າງຕົ້ນສະບັບ, ສື່ການຮຽນ - ການສອນຊັ້ນອະນຸບານ 3, ຈັດສື່ການຮຽນ-ການສອນຊັ້ນອະນຸບານ 2, ສ້າງ ຫຼັກສູດ, ປຶ້ມແບບຮຽນ ແລະ ຄູ່ມືກ່ຽວກັບການແຊກຊ້ອນເນື້ອໃນທີ່ສຳຄັນຂອງການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງລວມທັງຄວາມຮູ້ກ່ຽວກັບ

ອາຊຽນເຂົ້າໃນຫຼັກສູດຊັ້ນປະຖົມ-ມັດທະຍົມສຶກສາ, ປັບປຸງຫຼັກສູດ,ຄູ່ມືຊາວບ້ານ ແລະ ອຸປະກອນຈັດການຮຽນການສອນ ໃນການກຽມຄວາມພ້ອມເດັກຊໍ່າອາຍຸໃນຊຸມຊົນ. ພ້ອມທັງພັດທະນາຫຼັກສູດທ້ອງຖິ່ນຊັ້ນມັດທະຍົມ, ສ້າງຕົ້ນສະບັບແບບຮຽນ ແລະຄູ່ມືຄູ ມ.6, ຈັດພິມປຶ້ມແບບຮຽນ ແລະ ຄູ່ມືຄູ ມ.4, ມ.5, ແລ້ວຍັງສ້າງຫຼັກສູດນັກຮຽນເກັ່ງສໍາຫຼັບຫ້ອງ ແລະ ໂຮງຮຽນພອນສະຫວັນ. (ລູກລໍາເຊ 2013:4)

ປິຍາພອນ ວົງອານຸດຕະໂລດ (2553:60) ໄດ້ກ່າວເຖິງການບໍລິຫານຫຼັກສູດເປັນການດໍາເນີນວຽກງານກ່ຽວກັບຫຼັກສູດເພື່ອໃຫ້ເປັນໄປຕາມຈຸດປະສົງທີ່ຕັ້ງໄວ້ໂດຍການນໍາຂະບວນການບໍລິຫານວຽກງານໄປ ປະຍຸກໃຊ້ເພື່ອການເຮັດວຽກບັນລຸຈຸດປະສົງຂະບວນການບໍລິຫານງານແບ່ງອອກເປັນ 3 ຂັ້ນຕອນ ຄື: 1. ຂັ້ນກະກຽມການເປັນການວາງແຜນການໃຊ້ຫຼັກສູດໂດຍມີການກະກຽມກ່ຽວກັບຫຼັກສູດ ໄດ້ແກ່ການກວດສອບຫຼັກສູດແມ່ບົດ, ກ່ອນນໍາໄປໃຊ້, ການປະຊາສໍາພັນຫຼັກສູດ ແລະ ການກະກຽມຄວາມ ພ້ອມຂອງສິ່ງຕ່າງໆທີ່ກ່ຽວຂ້ອງກັບການບໍລິຫານຫຼັກສູດ ເຊັ່ນ: ການກະງົບປະມານຄ່າໃຊ້ຈ່າຍຈະເປັນ ຕົວຊີ້ບອກທີ່ເຮັດໃຫ້ຫຼັກສູດປະສົບຜົນສໍາເລັດ ຫຼື ບໍ່, ນອກຈາກຈະໃຊ້ໃນດ້ານຄ່າຈ້າງ, ຄ່າຕອບແທນແລ້ວ ຍັງໃຊ້ເປັນຄ່າໃຊ້ສອຍໃນການພັດທະນາອຸປະກອນຫຼັກສູດ, ປຶ້ມຄູ່ມືຄູ, ຄູ່ມືນັກຮຽນ, ເອກະສານປະກອບ ການສອນເປັນສິ່ງສະໜັບສະໜຸນຕໍ່ການສອນ; 2. ຂັ້ນດໍາເນີນການກ່ຽວກັບຫຼັກສູດເປັນການນໍາຫຼັກສູດໄປໃຊ້ຊຶ່ງມີທັງຝ່າຍປະຕິບັດຫຼັກສູດ ແລະຝ່າຍສະໜັບສະໜູນຕະຫຼອດຮອດຝ່າຍຄວບຄຸມການໃຊ້ຫຼັກສູດ; 3. ການປະເມີນຜົນການຮຽນ-ການສອນຕາມຫຼັກສູດເມື່ອມີການນໍາຫຼັກສູດໄປໃຊ້ຄວນຈະຕ້ອງມີ ການປະເມີນຜົນກ່ຽວກັບຫຼັກສູດເພື່ອພິຈາລະນາວ່າກົງກັບຈຸດປະສົງຂອງຫຼັກສູດ ຫຼື ບໍ່ ແລະມີສາເຫດມາ ຈາກອັນໃດທີ່ຈະໄດ້ໃຊ້ເປັນຂໍ້ມູນໃນການຕັດສິນໃຈປ່ຽນແປງ ແລະ ພັດທະນາຫຼັກສູດຕໍ່ໄປ.

ກະຊວງສຶກສາທິການ ແລະ ກິລາ (2009:4) ໄດ້ກ່າວເຖິງຄໍານິຍາມຂອງຂະບວນການບໍລິຫານວ່າ: ໜ້າທີ່ຕົ້ນຕໍ 4 ປະການຂອງການບໍລິຫານໄດ້ຮ່ວມກັນເຂົ້າເປັນຂະບວນການບໍລິຫານທີ່ມີໜ້າທີ່ດັ່ງນີ້: 1. ການວາງແຜນເພື່ອກໍານົດຈຸດປະສົງ, ກິດຈະກໍາ ແລະ ພາຫານະ; 2. ການຈັດຕັ້ງເພື່ອແບ່ງງານ, ຈັດຂອບເຂດ ແລະ ສາຍອໍານາດໜ້າທີ່; 3. ການປະຕິບັດຊຶ່ງຮຽກຮ້ອງໃຫ້ສະມາຊິກກຸ່ມແຕ່ລະຄົນປະຕິບັດໜ້າທີ່ຂອງຕົນຢ່າງຖືກຕ້ອງ.; 4. ການກວດກາກິດຈະກໍາຕ່າງໆ ເພື່ອໃຫ້ດໍາເນີນໄປຕາມແຜນ.

ເກດສຸດາ ເລັ່ງສະຫວັດ (2014) ພົບວ່າ: 1) ດ້ານການກະກຽມຫລັກສູດ ໂດຍພາບລວມມີການປະຕິບັດການບໍລິຫານຫລັກສູດຢູ່ໃນ ລະດັບຫລາຍ, ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າທຸກຂໍ້ມີການປະຕິບັດຢູ່ໃນລະດັບຫລາຍ, ຂໍ້ທີ່ ມີຄ່າສະເລ່ຍສູງສຸດໄດ້ແກ່ຫລັກສູດມີຄໍາອະທິບາຍ, ມີການປັບປຸງໃຫ້ສອດຄ່ອງກັບສະພາບຕົວຈິງ ສໍາລັບແຕ່ລະວິຊາ ແລະ ມີມາດຕະຖານການຮຽນຮູ້ຕາມຫລັກສູດ ຂອງກະຊວງສຶກສາທິ ການ ແລະ ກິລາວາງອອກສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າຂໍ້ອື່ນ ໄດ້ແກ່ມີການເຜີຍແຜ່ປະຊາ ສາພັນເພື່ອສ້າງຄວາມຮັບຮູ້-ຄວາມເຂົ້າໃຈໃຫ້ແກ່ຜູ້ປົກຄອງ, ຊຸມຊົນໃຫ້ເຫັນຄວາມສໍາຄັນໃນການປະຕິບັດຫລັກສູດ. 2) ດ້ານການກໍານົດແຜນການບໍລິຫານຫລັກສູດ ໂດຍພາບລວມມີການປະຕິບັດການບໍລິຫານ ຫລັກສູດຢູ່ໃນລະດັບຫລາຍ , ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍສູງສຸດໄດ້ແກ່ຄູ ມີສ່ວນຮ່ວມໃນການວາງແຜນການ,ການແນະນໍາດ້ານການສຶກສາຕໍ່ໃຫ້ແກ່ນັກຮຽນ.ສ່ວນຂໍ້ທີ່ມີຄ່າ ສະເລ່ຍໜ້ອຍກວ່າຂໍ້ອື່ນໄດ້ແກ່ໂຮງຮຽນຈັດໃຫ້ມີສື່ການຮຽນຮູ້ນະວັດຕະກໍາ ແລະ ເທັກໂນໂລຍີ ທາງການສຶກສາພຽງພໍຕາມຄວາມຕ້ອງການ. 3) ດ້ານການດໍາເນີນ

ການ ໃຊ້ຫລັກສູດ ໂດຍພາບລວມ ແລະ ທຸກຂໍ້ມີການ ປະຕິບັດການ ບໍລິຫານຫລັກສູດຢູ່ໃນລະດັບຫລາຍ, ເມື່ອພິຈາລະນາເປັນແຕ່ລະຂໍ້ພົບວ່າຂໍ້ທີ່ມີຄ່າສະເລ່ຍສູງສຸດ ໄດ້ແກ່ມີການລາຍງານຜົນການຮຽນຂອງນັກຮຽນ ໃຫ້ນັກຮຽນ ແລະ ຜູ້ປົກຄອງເປັນປົກກະຕິຕໍ່ ເນື່ອງ, ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າຂໍ້ອື່ນໄດ້ແກ່ ການເຊີນຜູ້ມີຄວາມຮູ້ທາງພູມປັນຍາ ທ້ອງຖິ່ນ ແລະ ວິທະຍາກອນຂອງທ້ອງຖິ່ນມາຮ່ວມຈັດກິດຈະກໍາ ການຮຽນຮູ້ສໍາລັບນັກຮຽນ. 4) ດ້ານການນິເທດ ຕິດຕາມ ແລະ ປະເມີນຜົນ ໂດຍລວມ ແລະ ທຸກຂໍ້ມີການ ປະຕິບັດການ ບໍລິຫານຫລັກສູດຢູ່ໃນລະດັບຫລາຍ. ສ່ວນຂໍ້ທີ່ມີຄ່າສະເລ່ຍສູງສຸດໄດ້ແກ່ມີການປະເມີນຜົນການ ໃຊ້ຫລັກສູດໃນທຸກພາກຮຽນ.ສ່ວນຂໍ້ທີ່ມີຄ່າສະເລ່ຍໜ້ອຍກວ່າຂໍ້ອື່ນໄດ້ແກ່ ພໍ່ແມ່, ຜູ້ປົກຄອງ ແລະ ຊຸມຊົນເຂົ້າມາມີສ່ວນຮ່ວມກິດຈະກໍາພັດທະນາຄຸນນະພາບການຮຽນ-ການສອນຂອງ ໂຮງຮຽນ.

ອີງຕາມບົດສະຫຼຸບຂອງພະແນກສຶກສາທິການ ແລະ ກິລາແຂວງເຊກອງ ມີ

ການວາງແຜນພັດທະນາປັບປຸງຫຼັກສູດໃນ ໂຮງຮຽນມັດທະຍົມສົມບູນຕາມຫຼັກສູດໃໝ່. ໄລຍະຜ່ານມາຜູ້ບໍລິຫານກໍໄດ້ເອົາໃຈໃສ່ບໍລິຫານພັດທະນາສະຖານການສຶກສາໃຫ້ໄດ້ດີ, ສະຖານການສຶກສາໄດ້ຮັບການປັບປຸງໃຫ້ດີຂຶ້ນຢູ່ເລື້ອຍໆຄຽງຄູ່ກັນນັ້ນການບໍລິຫານຫຼັກສູດພົບວ່າ: ຄູສອນຍັງຂາດຄວາມເຂົ້າໃຈກ່ຽວກັບການນໍາໃຊ້ຫລັກສູດໃໝ່, ຂາດການສຶກສາຄົ້ນຄ້ວາກ່ຽວກັບຫລັກສູດເຊັ່ນ:ຕໍາລາເພີ່ມຫລາຍຂຶ້ນ, ເວລາຊົ່ວໂມງຕໍາລາຫລຸດລົງ, ເນື້ອໃນຫລາຍເກີນໄປແລ່ນນໍາຫລັກສູດ, ຄູບໍ່ປ່ຽນພຶດຕິກໍາໃນການສອນ, ຄູບໍ່ເອົາໃຈໃສ່ຕໍ່ກັບກິດຈະກໍາການຮຽນ-ການສອນ, ສື່ປະກອບການສອນຍັງບໍ່ທັນເໝາະສົມຕາມເນື້ອໃນບົດຮຽນ, ຄູຂາດທັກສະໃນການວັດ ແລະ ການປະເມີນຜົນການຮຽນ, ຜູ້ບໍລິຫານຂາດການຕິດຕາມ, ການປະເມີນຜົນ ແລະ ການນິເທດການນໍາໃຊ້ຫຼັກສູດໃຫ້ແກ່ຄູ, ຜູ້ບໍລິຫານຈໍານວນໜຶ່ງຍັງບໍ່ມີຄວາມເຂົ້າໃຈໃນການຈັດການບໍລິຫານຫຼັກສູດ ແລະ ຂາດການສະໜັບສະໜູນສິ່ງເສີມຫລືຂາດການເຜີຍແຜ່ໃນການນໍາໃຊ້ຫຼັກສູດໃໝ່ໃຫ້ທ່ວງທັນກັບເວລາ, ຄູສຶກສານິເທດບໍ່ທັນມີຄວາມເຂົ້າໃຈຕໍ່ກັບຫຼັກສູດຢ່າງເລິກເຊິ່ງ. (ພະແນກສຶກສາທິການ ແລະ ກິລາແຂວງເຊກອງ, 2020),

ສະນັ້ນ, ຕໍ່ກັບບັນຫາດັ່ງກ່າວນັກຄົ້ນຄວ້າຈຶ່ງເຫັນເຖິງຄວາມສໍາຄັນ ແລະ ມີຄວາມສົນໃຈຢາກສຶກສາກ່ຽວກັບການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນພາຍໃນແຂວງ ເຊກອງ ເພື່ອຈະໄດ້ເປັນຂໍ້ມູນໃຊ້ເປັນແນວທາງ ແລະ ຂໍ້ສະເໜີແນະໃນການບໍລິຫານຫຼັກສູດແກນກາງຂອງຊາດໃຫ້ໄດ້ດີຂຶ້ນຢ່າງກວ້າງຂວາງ ແລະ ທົ່ວເຖິງໃນທ້ອງຖິ່ນ.

## 2. ຄໍາຖາມຄົ້ນຄວ້າ.

1) ສະພາບການບໍລິຫານຫຼັກສູດໃນໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງເປັນແນວໃດ?

2) ຜູ້ບໍລິຫານ ແລະ ຄູສອນໂດຍຈໍາແນກຕາມຕໍາແໜ່ງ, ວຸດທິການສຶກສາ, ປະສົບການເຮັດວຽກ ແລະ ສັງກັດໃນໂຮງຮຽນມັດທະຍົມສົມບູນພາຍໃນເມືອງຕ່າງກັນມີຄວາມເຫັນຕໍ່ກັບສະພາບການບໍລິຫານຫຼັກສູດໃນໂຮງຮຽນມັດທະຍົມສົມບູນແຂວງເຊກອງເປັນຄືແນວໃດ?

3) ຜູ້ບໍລິຫານ ແລະ ຄູສອນມີຂໍ້ສະເໜີແນະກ່ຽວກັບການບໍລິຫານຫຼັກສູດໃນໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງຄືແນວໃດ?

3. ຈຸດປະສົງຂອງການວິໃຈ

1) ເພື່ອສຶກສາສະພາບການບໍລິຫານຫຼັກສູດໃນໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງ.

2) ເພື່ອປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນຕໍ່ກັບການບໍລິຫານຫຼັກສູດ ຂອງ ໂຮງຮຽນ ມັດທະຍົມສົມບູນພາຍໃນແຂວງເຊກອງ ໂດຍ

ຈຳແນກຕຳແໜ່ງ, ວຸດທິການສຶກສາ, ປະສົບການເຮັດວຽກ ແລະ ທີ່ຕັ້ງຂອງໂຮງຮຽນ.

3) ເພື່ອສຶກສາແນວທາງ ແລະ ຂໍ້ສະເໜີແນະກ່ຽວກັບການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງ

**4. ວິທີການຄົ້ນຄວ້າ**

ການສຶກສາຄົ້ນຄວ້າຄັ້ງນີ້ ເປັນການ ຄົ້ນຄວ້າສຳຫຼວດຄວາມຄິດເຫັນກ່ຽວກັບການບໍລິຫານຫຼັກສູດຂອງຜູ້ບໍລິຫານ ແລະ ຄູສອນໃນໂຮງຮຽນມັດທະຍົມສຶກສາພາຍໃນແຂວງເຊກອງ. ໃນການສຶກສາຄັ້ງນີ້ກຸ່ມຕົວຢ່າງໄດ້ແກ່ຜູ້ບໍລິຫານ ແລະ ຄູ-ອາຈານສອນພາຍໃນໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງ ເຊິ່ງມາຈາກ 3 ເມືອງ ຄື:ເມືອງລະມາມ ເມືອງທ່າແຕງ ແລະ ເມືອງດາກຈຶງ ມີຈຳນວນ 183 ຄົນ. ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນການສຶກສາຄົ້ນຄ້ວາຄັ້ງນີ້ ເປັນແບບສອບຖາມ. ການວິເຄາະຂໍ້ມູນແມ່ນວິເຄາະຕາມລັກສະນະຂອງຂໍ້ມູນ ໂດຍການນຳໃຊ້ໂປຣແກຣມສຳເລັດຮູບ SPSS.

**5. ຜົນໄດ້ຮັບ**

**5.1 ຜົນການສຶກສາກ່ຽວກັບລະດັບການປະຕິບັດການບໍລິຫານຫຼັກສູດໂຮງຮຽນ ມັດທະຍົມສົມບູນ ພາຍໃນແຂວງເຊກອງ**

ຈາກຕາຕະລາງທີ 1 ພົບວ່າລະດັບການ ປະຕິບັດການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງໂດຍພາບລວມຢູ່ໃນລະດັບຫຼາຍເຊິ່ງ ($\bar{X}$=4.06 ; $S.D$=0.65), ເມື່ອພິຈາລະນາເປັນແຕ່ລະດ້ານພົບວ່າ:ດ້ານການນິເທດ,ຕິດຕາມແລະປະເມີນຜົນຢູໃນລະດັບຫຼາຍເຊິງ ($\bar{X}$= 4.14;$S.D$=0.63 ຮອງລົງມາໄດ້ແກ່ດ້ານການກຳນົດແຜນບໍລິຫານຫຼັກສູດມີ ($\bar{X}$=4.07;$S.D$ =0.66), ດ້ານການດຳເນີນການໃຊ້ຫຼັກສູດ ( $\bar{X}$=4.06 ; $S.D$ = 0.66) ແລະ ດ້ານການກະກຽມຫຼັກສູດ ( $\bar{X}$=4.00; $S.D$=0.67).

**5.2 ຜົນການວິເຄາະຂໍ້ມູນກ່ຽວກັບການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນຕໍ່ ການປະຕິບັດການບໍລິຫານຫຼັກສູດ ໂຮງຮຽນມັດທະຍົມ**

**ສົມບູນພາຍໃນແຂວງເຊກອງໂດຍຈຳແນກຕາມຕຳແໜ່ງ, ວຸດທິການສຶກສາ, ປະສົບການເຮັດວຽກ ແລະ ທີ່ຕັ້ງຂອງໂຮງຮຽນ**

**1) ການປຽບທຽບກ່ຽວກັບການປະຕິບັດການບໍລິຫານຫຼັກສູດ ໂຮງຮຽນມັດທະຍົມສົມບູນ ພາຍໃນແຂວງ ເຊກອງໂດຍຈຳແນກຕາມຕຳແໜ່ງ**

ຈາກຕາລາງທີ 2 ພົບວ່າ ຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການປະຕິບັດການບໍລິຫານຫຼັກສູດຂອງໂຮງຮຽນມັດທະຍົມສົມບູນພາຍໃນ ແຂວງເຊກອງ ຈຳແນກຕາມຕຳແໜ່ງ ໂດຍລວມ ບໍ່ສອດຄ່ອງກັບສົມມຸດຕິຖານທີ່ຕັ້ງໄວ້ ຄູສອນທີ່ມີຕຳແໜງຕ່າງກັນມີຄວາມຄິດເຫັນຕໍ່ການປະຕິບັດການບໍລິຫານຫຼັກສູດຂອງໂຮງຮຽນມັດທະຍົມສົມບູນພາຍໃນ ແຂວງເຊກອງ ບໍ່ແຕກຕ່າງກັນ.

**2) ການປຽບທຽບກ່ຽວກັບການປະຕິບັດການບໍລິຫານຫຼັກສູດ ໂຮງຮຽນມັດທະຍົມສົມບູນ ພາຍໃນແຂວງເຊກອງໂດຍຈຳແນກຕາມວຸດທິການສຶກສາ**

ຈາກຕາລາງ 4. 9 ພົບວ່າ: ການປຽບທຽບຄວາມແຕກຕ່າງຂອງການປະຕິບັດການບໍລິຫານຫຼັກສູດແຍກຕາມວຸດທິການສຶກສາຕໍ່ກັບດ້ານການກະກຽມຫຼັກສູດເປັນລາຍຄູ່ໂດຍວິທີຂອງເຊບເຟ (Scheffe) ພົບວ່າ: ມີຄວາມແຕກຕ່າງກັນຢ່າງມີລະດັບຄວາມສຳຄັນທາງສະຖິຕິທີ່ 0.05 ມີຈຳນວນ 1 ຄູ່ ໄດ້ແກ່: ຜູ້ບໍລິຫານ ແລະ ຄູສອນທີ່ຈົບການສຶກສາລະດັບຊັ້ນສູງ ມີຄວາມຄິດເຫັນຕໍ່ກັບການກະກຽມຫຼັກສູດຫຼາຍກວ່າຄູຈົບປະລິນຍາຕີ.

**3) ການປຽບທຽບກ່ຽວກັບການປະຕິບັດການບໍລິຫານ ຫຼັກສູດ ໂຮງຮຽນມັດທະຍົມສົມບູນ ພາຍໃນແຂວງເຊກອງຈໍາແນກຕາມປະສົບການໃນການສອນ**

ຈາກຕາລາງທີ 4 ການປຽບທຽບຄວາມແຕກຕ່າງຂອງການປະຕິບັດການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງໂດຍຈໍາແນກຕາມປະສົບການສອນປະກອບມີ: ດ້ານການກະກຽມຫຼັກສູດ, ດ້ານການກໍານົດແຜນບໍລິຫານຫຼັກສູດ, ດ້ານການດໍາເນີນການໃຊ້ຫຼັກສູດ, ດ້ານການນິເທດ, ຕິດຕາມ ແລະ ປະເມີນຜົນ ພົບວ່າ: ໂດຍລວມ ແລະ ແຕ່ລະດ້ານບໍ່ແຕກຕ່າງກັນ ຢ່າງມີຄວາມສໍາຄັນທີ່ລະດັບ 0,05.

**4) ການປຽບທຽບກ່ຽວກັບການປະຕິບັດການບໍລິຫານ ຫຼັກສູດ ໂຮງຮຽນມັດທະຍົມສົມບູນ ພາຍໃນແຂວງເຊກອງຈໍາແນກຈໍາແນກຕາມທີ່ຕັ້ງຂອງໂຮງຮຽນ**

ຈາກຕາຕາລາງທີ 5 ການປຽບທຽບຄວາມແຕກຕ່າງຂອງການປະຕິບັດການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງໂດຍແນກຕາມທີ່ຕັ້ງຂອງໂຮງຮຽນຕໍ່ກັບການປະຕິບັດການບໍລິຫານຫຼັກສູດປະກອບມີ: ດ້ານການກະກຽມຫຼັກສູດ, ດ້ານການກໍານົດແຜນບໍລິຫານຫຼັກສູດ, ດ້ານການດໍາເນີນການໃຊ້ຫຼັກສູດ, ດ້ານການນິເທດ, ຕິດຕາມ ແລະ ປະເມີນຜົນ. ຜົນຈາກທົດສອບພົບວ່າ: ໃນເທດສະບານເມືອງ ແລະ ນອກເທດສະບານເມືອງ ໂດຍລວມ ແລະ ແຕ່ລະດ້ານບໍ່ແຕກຕ່າງກັນຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0,05.

**5) ຜົນການວິເຄາະຄວາມຄິດເຫັນ ກ່ຽວກັບແນວທາງ ແລະ ຂໍ້ສະເໜີແນະຕໍ່ກັບການບໍລິຫານ ຫຼັກສູດໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງ.**

- ດ້ານກະກຽມຫຼັກສູດ:
  - ກ່ອນໄຂສົກຮຽນໃໝ່ຄວນມີການເຜີຍແຜ່ການປະຕິບັດຫຼັກສູດໃຫ້ແກ່ຄູ - ອາຈານ ແລະ ນັກຮຽນຮັບຮູ້ກ່ອນ.
- ດ້ານການກໍານົດແຜນການບໍລິຫານຫຼັກສູດ
  - ສ້າງໂຮງຮຽນໃຫ້ມີການດໍາເນີນການຮຽນ - ການສອນ ຕາມລະບົບປະກັນຄຸນນະພາບການສຶກສາທີ່ທາງກະຊວງສຶກສາທິການ ແລະ ກິລາ ວາງອອກ.
  - ຄວນສ້າງສິ່ງແວດລ້ອມທີ່ເອື້ອອໍານວຍຕໍ່ການຮຽນ - ການສອນເຊັ່ນ: ຫ້ອງຮຽນ, ຫ້ອງນໍ້າ ແລະ ເດີ່ນໂຮງຮຽນ, ລະບົບຄວາມປອດໄພຂອງໂຮງຮຽນ.
  - ໃນລະບົບໂຄງສ້າງການບໍລິຫານຫຼັກສູດຄວນມີຊຸມຊົນຄືຄະນະພັດທະນາການສຶກສາຂັ້ນບ້ານເຂົ້າມາມີສ່ວນຮ່ວມ.
- ດ້ານການດໍາເນີນການນໍາໃຊ້ຫຼັກສູດ
  - ຄວນຕອບສະໜອງສື່ ແລະ ອຸປະກອນການຮຽນ - ການສອນ ໃຫ້ພຽງພໍ ແລະພັດທະນາແຫຼ່ງຮຽນຮູ້ເຊັ່ນ: ຫໍສະໝຸດ, ຫ້ອງອ່ານ, ຫ້ອງທົດລອງ.
  - ເຊີນຜູ້ທີ່ມີຄວາມຮູ້ທາງພູມປັນຍາທ້ອງຖິ່ນ ແລະ ວິທະຍາກອນທ້ອງຖິ່ນມາຮ່ວມຈັດກິດຈະກໍາການຮຽນຮູ້ສໍາລັບນັກຮຽນ.
  - ຄວນມີການປັບປຸງເນື້ອໃນຄວາມຮູ້ໃນແຕ່ລະວິຊາເພື່ອໃຫ້ສອດຄ່ອງກັບສະພາບປັດຈຸບັນ ແລະ ທ້ອງຖິ່ນ, ສ້າງໃຫ້ນັກຮຽນໄດ້ຮຽນຮູ້ການປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ.
- ດ້ານການນິເທດ, ຕິດຕາມ ແລະ ການປະເມີນຜົນ.
  - ຄວນມີການຕິດຕາມ ແລະ ປະເມີນຜົນຫຼັກສູດແຕ່ລະໄລຍະ.
  - ຄວນຈັດການຝຶກອົບຮົມໃຫ້ ຄູ-ອາຈານ ໃນການນໍາໃຊ້ຫຼັກສູດເປັນແຕ່ລະລາຍວິຊາ.

**4.2 ອະພິປາຍຜົນ**

ຈາກຜົນການສຶກສາຄົ້ນຄວ້າພົບວ່າ ການປະຕິບັດການບໍລິຫານຫຼັກສູດ ໂຮງຮຽນ ມັດທະຍົມສົມບູນພາຍໃນແຂວງເຊກອງໃນ 4 ດ້ານຄື: ດ້ານການກະກຽມຫຼັກສູດ, ດ້ານການກໍານົດແຜນການບໍລິຫານຫຼັກສູດ, ດ້ານການດໍາເນີນການໃຊ້ຫຼັກສູດ ແລະ ດ້ານ ການນິເທດ

, ຕິດຕາມ ແລະ ປະເມີນຜົນ. ໂດຍພາບລວມແລ້ວ ເຫັນວ່າໃນຫລາຍດ້ານ ແລະ ໃນແຕ່ລະຂໍ້ມີການປະຕິບັດໃນລະດັບຫຼາຍ. ເນື່ອງຈາກວ່າ, ການບໍລິຫານຫຼັກສູດເປັນຫົວໃຈຂອງການບໍລິຫານການສຶກສາ ບໍ່ພຽງແຕ່ຈະຈັດການໃຫ້ນັກຮຽນມີຄວາມຮູ້ຕາມທີ່ກໍານົດເທົ່ານັ້ນແຕ່ຕ້ອງໃຫ້ນັກຮຽນໄດ້ມີ ການພັດທະນາຕົນ, ໃຫ້ມີຄຸນສົມບັດ, ມີຄວາມຮັບຜິດຊອບລວມທັງເປັນບຸກຄົນທີ່ດີຂອງສັງຄົມນໍາອີກດ້ວຍ. ດັ່ງນັ້ນ, ໃນສະຖານການສຶກສາ ແລະ ຜູ້ທີ່ກ່ຽວຂອງກັບການຈັດການສຶກສາທັງພາຍໃນເທດສະບານ ແລະ ນອກເທດສະບານແຂວງ. ທຸກໆໂຮງຮຽນ ຕ້ອງໄດ້ໃຫ້ຄວາມຮ່ວມມື ແລະ ສະໜັບສະໜູນໃນການດໍາເນີນການໃນທຸກໆ ດ້ານຈຶ່ງຈະສາມາດເຮັດໃຫ້ບັນລຸເປົ້າໝາຍຂອງຫຼັກສູດໄດ້.

- ຈາກຜົນຂອງການຄົ້ນຄວ້າເຫັນວ່າມີຄວາມສອດຄ່ອງກັບບາງປະເດັນ ຂອງບົດຄົ້ນຄວ້າ ເກດສຸດາ ເລັ່ງສະຫວັດ (2014) ໄດ້ສຶກສາຄົ້ນຄວ້າກ່ຽວກັບການບໍລິຫານຫຼັກສູດໂຮງຮຽນມັດທະຍົມສຶກສາໃນນະຄອນຫລວງວຽງຈັນ ພົບວ່າ ການປະຕິບັດການບໍລິຫານຫຼັກສູດໃນ 4 ດ້ານໄດ້ແກ່: ດ້ານການກະກຽມຫຼັກສູດ, ດ້ານການກໍານົດແຜນການບໍລິຫານຫຼັກສູດ, ດ້ານການດໍາເນີນການໃຊ້ຫຼັກສູດ ແລະ ດ້ານການນິເທດ, ການຕິດຕາມ ແລະ ປະເມີນຜົນ. ໂດຍພາບລວມການບໍລິຫານຫຼັກສູດເປັນຫົວໃຈ ຂອງການບໍລິຫານການສຶກສາບໍ່ພຽງແຕ່ຈະຈັດການສຶກສາໃຫ້ນັກຮຽນມີຄວາມຮູ້ຕາມທີ່ກໍານົດເທົ່ານັ້ນແຕ່ຈະຕ້ອງໃຫ້ນັກຮຽນມີການພັດທະນາຕົນເອງ, ມີຄຸນສົມບັດ, ມີຄວາມຮັບຜິດຊອບລວມທັງເປັນບຸກຄົນທີ່ດີ ຂອງສັງຄົມ. ດັ່ງນັ້ນ, ສະຖາບັນການສຶກສາ ແລະ ຜູ້ກ່ຽວຂ້ອງກັບການຈັດການສຶກສາທັງພາຍໃນ ແລະ ພາຍນອກໂຮງຮຽນຕ້ອງໃຫ້ສິ່ງເສີມໃຫ້ຄວາມຮ່ວມມື ແລະ ສະໜັບສະໜູນໃນການດໍາເນີນການໃນທຸກດ້ານ ຈຶ່ງຈະບັນລຸເປົ້າໝາຍຂອງຫຼັກສູດ. ຫຼັກການບໍລິຫານຫຼັກສູດເປັນການດໍາເນີນການກ່ຽວກັບຫຼັກສູດເພື່ອໃຫ້ ບັນລຸຕາມຫຼັກການ ແລະ ຈຸດໝາຍຂອງຫຼັກສູດ, ຜູ້ບໍລິຫານຈະຕ້ອງເປັນຜູ້ນໍາໃນການໃຊ້ຫຼັກສູດຢ່າງຖືກຕ້ອງ, ການກຽມພ້ອມດ້ານບຸກຄະລາກອນ, ອາຄານສະຖານທີ່, ເອກະສານ, ແຫຼ່ງຂໍ້ມູນ,

ງົບປະມານ, ການວາງແຜນການໃຊ້ຫຼັກສູດ, ການປະຊາສໍາພັນ ແລະ ເຜີຍແຜ່, ການດໍາເນີນງານບໍລິຫານຫຼັກສູດ ແລະ ການປະເມີນຜົນ, ເພື່ອນໍາຂໍ້ມູນທີ່ໄດ້ມາປັບປຸງ ແລະ ພັດທະນາຫຼັກສູດຕໍ່ໄປ, ຫຼັກສູດການຮຽນ-ການສອນ ແຕ່ລະຫຼັກສູດຍ່ອມມີຄວາມສໍາຄັນໃນການຈັດການຮຽນການສອນ ແລະ ປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ ແລະ ຄຸນນະພາບສອດຄ່ອງກັບການສຶກສາ ໃນໄລຍະໃໝ່.

ຜົນການສຶກສານີ້ຍັງສອດຄ່ອງກັບບົດຄົ້ນຄວ້າຂອງ ປິຍາພອນ ບຸນທໍາ (2546) ໄດ້ສຶກສາເລື່ອງ ການບໍລິຫານຫຼັກສູດການສຶກສາຂັ້ນພື້ນຖານໃນ ສະຖານສຶກສາແຂວງ ສີສະເກດ (ປະເທດໄທ) ພົບວ່າ ການດໍາເນີນງານບໍລິຫານຫຼັກສູດໂດຍພາບລວມຢູ່ໃນ ລະດັບຫຼາຍການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນທີ່ກ່ຽວກັບການບໍລິຫານຫຼັກສູດການ ສຶກສາຂັ້ນພື້ນຖານໃນພາບລວມພົບວ່າ: ແຕກຕ່າງກັນຢ່າງມີຄວາມສໍາຄັນທີ່ລະດັບ 0.5 ເມື່ອພິຈາລະນາເປັນ ບາງດ້ານ ພົບວ່າ ຂັ້ນຕອນການກຽມພ້ອມຂອງສະຖານສຶກສາ ແລະ ຂັ້ນຕອນການກໍາກັບຕິດຕາມປະເມີນ ຜົນ ແລະ ລາຍງານຜົນ ແຕກຕ່າງກັນຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0,5. ບັນຫາ ແລະ ຂໍ້ສະເໜີ ແນະທີ່ໄດ້ຈາກການຄົ້ນຄວ້າ ພົບວ່າ: ຄູ ແລະ ຜູ້ທີ່ກ່ຽວຂ້ອງມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບຫຼັກສູດ ແລະ ການວັດປະເມີນຜົນບໍ່ຊັດເຈນ, ຄວນມີການອົບຮົມໃນທາງປະຕິບັດການໃຫ້ຄູ

ແລະ ຜູ້ກ່ຽວຂ້ອງທຸກ ຄົນ. ໂດຍສະເພາະເລື່ອງກ່ຽວກັບການວັດປະເມີນຜົນຄວນສົ່ງເສີມໃຫ້ຄູມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບການເຮັດວິໄຈໃນຊັ້ນຮຽນໃຫ້ຫຼາຍຂຶ້ນ ແລະ ຄວນມີການຕິດຕາມປະມີນຜົນການໃຊ້ຫຼັກສູດຢ່າງຕໍ່ເນື່ອງ ເປັນລະບົບ, ລາຍງານຜົນຕໍ່ຜູ້ກ່ຽວຂ້ອງ ແລະ ສາທາລະນະຊົນຮັບຮູ້.

ດ້ານການກຽມຄວາມພ້ອມເຫັນວ່າມີຄວາມສອດຄ່ອງກັບ ບົດຄົ້ນຄວ້າຂອງ ຣົງ ເໜືອນປະສາດ (2546) ທີ່ໄດ້ສຶກສາເລື່ອງການບໍລິຫານການຈັດຫຼັກສູດສະຖານສຶກສາຂັ້ນພື້ນຖານຂອງໂຮງຮຽນຕົວແບບ ແລະ ໂຮງຮຽນ ສາຂາສ່ວນໃຫຍ່ທີ່ປະຕິບັດໄດ້ເຕັມຮູບແບບ ໄດ້ແກ່ດ້ານການກຽມຄວາມພ້ອມຂອງໂຮງຮຽນໃນເລື່ອງການ ແຕ່ງຕັ້ງຄະນະກຳມະການ ແລະ ຄະນະອານຸກຳມະການຕາມລະບຽບກະຊວງສຶກສາທິການ ວ່າດ້ວຍຄະນະ ກຳມະການບໍລິຫານຫຼັກສູດ ແລະ ວຽກງານວິຊາການສະຖານສຶກສາຂັ້ນພື້ນຖານ. ການສ້າງຄວາມເຊື່ອໝັ້ນ ໃຫ້ແກ່ບຸກຄະລາກອນ ແລະ ການພັດທະນາບຸກຄະລາກອນຂອງສະຖານສຶກສາໃຫ້ມີຄວາມຮູ້, ຄວາມເຂົ້າໃຈ,ໃນດ້ານການສ້າງຫຼັກສູດສະຖານສຶກສາຂັ້ນພື້ນຖານຂອງໂຮງຮຽນ.ໃນເລື່ອງການກຳນົດວິໄສທັດຂອງ ສະຖານສຶກສາ, ການກຳນົດພາລະກິດຂອງສະຖານສຶກສາ, ການກຳນົດເປົ້າໝາຍຂອງສະຖານສຶກສາ, ການກຳນົດຄຸນລັກສະນະຈຸດປະສົງອັນແທ້ຈິງຂອງຜູ້ຮຽນ, ການຈັດເນື້ອໃນການຮຽນຮູ້ໃນແຕ່ລະຊັ້ນຮຽນ, ການກຳນົດຜົນການຮຽນຮູ້ທີ່ຄາດຫວັງ, ການຈັດຈັດເນື້ອໃນການຮຽນຮູ້ລາຍປີ, ການໃຫ້ຄຳອະທິບາຍລາຍວິຊາ, ການສ້າງໜ່ວຍງານຮຽນຮູ້ ແລະ ກຳນົດກິດຈະກຳພັດທະນາຜູ້ຮຽນສ່ວນບັນຫາທີ່ໂຮງຮຽນສ່ວນໃຫຍ່ປະສົບ ໄດ້ແກ່: ຂາດແຄນງົບປະມານໃນການດຳເນີນວຽກງານ, ບຸກຄະລາກອນມີຈຳນວນຈຳກັດ, ຄູ່ມີຫຼາຍວຽກທີ່ຮັບຜິດຊອບ, ໄລຍະເວລາໃນການເຮັດຫຼັກສູດໜ້ອຍເກີນໄປ, ເອກະສານການປະເມີນຜົນການຮຽນຍັງບໍ່ຄົບຖ້ວນສົມບູນ, ການເຮັດຄົ້ນຄວ້າໃນຊັ້ນຮຽນຍັງບໍ່ປະສົບຄວາມສຳເລັດ, ການນິເທດ, ກຳກັບ, ຕິດຕາມ ແລະ ປະເມີນຜົນຍັງບໍ່ເປັນລະບົບ ແລະ ຍັງບໍ່ມີແນວທາງທີ່ຊັດເຈນໃນການປັບປຸງ ແລະ ພັດທະນາຂະບວນການບໍລິຫານຈັດການຫຼັກສູດ.

ການສຶກສານີ້ຍັງສອດຄ່ອງກັບບົດຄົ້ນຄວ້າຂອງກະຊວງສຶກສາທິການໄທ (2546) ການສຶກສາຕິດຕາມ ແລະ ປະ ເມີນຜົນການໃຊ້ຫຼັກສູດສະຖານສຶກສາຂັ້ນພື້ນຖານຂອງສະຖານສຶກສາທີ່ເປັນໂຮງຮຽນຕົວແບບ ແລະ ໂຮງຮຽນສາຂາໃນລະດັບມັດທະຍົມສຶກສາພົບວ່າ: ປັດໄຈໃນການໃຊ້ຫຼັກສູດສະຖານສຶກສາ, ດ້ານບຸກຄະລາກອນເຫັນວ່າຜູ້ບໍລິຫານສ່ວນໃຫຍ່ແມ່ນມີການບໍລິຫານຈັດການ ແລະ ທັກສະໃນການບໍລິຫານຫຼັກສູດຢູ່ໃນລະດັບຫຼາຍ, ໂຮງຮຽນສ່ວນໃຫຍ່ມີສິ່ງອຳນວຍຄວາມສະດວກຕໍ່ການໃຊ້ຫຼັກສູດມີຂະບວນການທີ່ດີໃນການໃຊ້ຫຼັກສູດ ແລະ ຜົນຜະລິດການໃຊ້ຫຼັກສູດໄດ້ແກ່ຄວາມຄິດເຫັນຕໍ່ການໃຊ້ຫຼັກສູດຂອງທຸກຝ່າຍຢູ່ໃນລະດັບຫຼາຍ ແລະ ນັກຮຽນສ່ວນໃຫຍ່ຜ່ານເກນການປະເມີນທຸກໆກຸ່ມວິຊາຢ່າງໃດກໍ່ຕາມການໃຊ້ຫຼັກສູດຂອງສະຖານສຶກສາຍັງມີບັນຫາທາງດ້ານຄວາມຮູ້, ຄວາມເຂົ້າໃຈຂອງຄູຕໍ່ຫຼັກສູດຍັງບໍ່ຊັດເຈນ, ຄູມີວຽກງານຫຼາຍພິເສດ, ຂາດແຄນຄູໂດຍສະເພາະວິຊາຫຼັກໄດ້ແກ່: ຄະນິດສາດ, ວິທະຍາສາດ ແລະ ຂາດຜູ້ນິເທດທີ່ມີຄວາມຮູ້, ຄວາມຊຳນານ ແລະ ປະສົບການໃນການນິເທດ, ຄູບໍ່ເຂົ້າໃຈເນື້ອໃນການຮຽນຮູ້, ການເຮັດແຜນບູລະນາການ, ວິທີການວັດ ແລະ ປະເມີນຜົນ, ຈັດກິດຈະກຳບໍ່ຫຼາກຫຼາຍ ແລະ ນັກຮຽນບໍ່ໄດ້ເລືອກ ຕາມຄວາມສົນໃຈ.

ຈາກຜົນຂອງການສຶກສາເຫັນວ່າບໍ່ສອດຄ່ອງກັບບົດຄົ້ນຄວ້າຂອງ ຄຳພິມາ ເຊື່ອມຈິດ (2539)ໄດ້ສຶກສາຄົ້ນຄວ້າເລື່ອງການບໍລິຫານ ຫຼັກສູດມັດທະຍົມສຶກສາສັງກັດກົມສາມັນແຂວງເພັດສະບູລີ(ປະເທດໄທ) ເຊິ່ງ

ຜົນການຄົ້ນຄວ້າພົບວ່າ: ການ ດຳເນີນງານບໍລິຫານຫຼັກສູດມັດທະຍົມສຶກສາຕອນຕົ້ນໂຮງຮຽນດຳເນີນການກຽມພ້ອມຂອງຄູໃຫ້ມີຄວາມ ໃນເລື່ອງຫຼັກສູດ, ແຕ່ການດຳເນີນງານຕາມແຜນການໃຊ້ຫຼັກສູດໂຮງຮຽນໄດ້ປະຕິບັດເປັນສ່ວນໜ້ອຍ.

ຈາກຜົນການສຶກສາປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູ-ອາຈານໃນໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງ. ກ່ຽວກັບການບໍລິຫານຫຼັກສູດໂດຍຈຳແນກຕາມຕຳແໜ່ງ, ວຸດທິການ ສຶກສາ, ປະສົບການສອນ ແລະ ທີ່ຕັ້ງຂອງໂຮງຮຽນ ຕາມ 4 ດ້ານ ພົບວ່າ: ມີ 3 ດ້ານບໍ່ແຕກຕ່າງກັນ ແລະ ມີດ້ານຈຳແນກຕາມວຸດທິການສຶກສາທີມີຄວາມຄິດເຫັນທີ່ແຕກຕ່າງກັນ. ເນື່ອງຈາກ ວ່າການດຳເນີນການບໍລິຫານຫຼັກສູດແມ່ນເປັນໄປຕາມຂໍ້ກຳນົດຂອງກະຊວງສຶກສາທິການ ແລະ ກິລາວາງ ອອກ, ໂດຍຜູ້ບໍລິຫານ ແລະ ຄູອາຈານໄດ້ຮັບການອົບຮົມໃນການນຳໃຊ້ຫຼັກສູດ, ການບໍລິຫານໂຮງຮຽນ ຕາມ 7 ໜ້າວຽກຂອງຜູ້ບໍລິຫານ, ຄູອາຈານໃນໂຮງຮຽນມີຄວາມເຂົ້າໃຈ ແລະ ວິທີປະຕິບັດໃນທິດທາງດຽວ ກັນ, ຫຼັກສູດສະຖານສຶກສາຈະມີຄວາມສຳພັນກັບການບໍລິຫານຫຼັກສູດ, ຜົນຜະລິດຈາກການບໍລິຫານຫຼັກສູດຈະຖືກນຳມາສະເໜີໃນຫຼັກສູດການສຶກສາເພື່ອໃຫ້ບຸກຄົນທັງພາຍໃນ ແລະ ພາຍນອກສະຖານການສຶກສາຮູ້ວ່າສະຖານການສຶກສາຈະຈັດການສຶກສາແນວໃດເພື່ອ ກໍ່ໃຫ້ເກີດປະໂຫຍດໃນດ້ານການສ້າງຄວາເຂົ້າໃຈ, ຄວາມຮ່ວມມື, ການປະສານງານ ແລະ ການດຳເນີນງານໃນສ່ວນທີ່ກ່ຽວຂ້ອງໄດ້ຢ່າງມີປະສິດທິພາບ.

## 6. ສະຫລຸບຜົນ

ຈາກຜົນຂອງການຄົ້ນຄວ້າຜູ້ຄົ້ນຄວ້າສາມາດ ສະຫຼຸບໄດ້ດັ່ງນີ້:

1. ສະພາບການບໍລິຫານຫຼັກສູດພາຍໃນໂຮງຮຽນມັດທະຍົມສົມບູນຢູ່ແຂວງເຊກອງພົບວ່າ:

ດ້ານການກະກຽມຫຼັກສູດ: ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນຫຼັກສູດທີ່ນຳມາໃຊ້ໄດ້ກຳນົດວິທີການວັດປະເມີນຜົນໄວ້ຢ່າງຊັດເຈນ. ສ່ວນຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ຜູ້ບໍຫານ-ຄູສອນ ແລະ ບຸກຄະລາກອນໃນຊຸມຊົນມີສ່ວນຮ່ວມໃນການກຳນົດມາດຕະຖານແລະເນື້ອໃນການຮຽນຮູ້ຂອງແຕ່ລະວິຊາ.

ການກຳນົດແຜນການບໍລິຫານຫຼັກສູດ: ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນຄູມີສ່ວນຮ່ວມໃນການວາງແຜນການ ,ການແນະນຳດ້ານແນວຄິດຄຸນສົມບັດແລະພຶດຕິກຳໃຫ້ແກ່ນັກຮຽນ.ສ່ວນທີ່ມີຄ່າສະເລ່ຍຕ່ຳສຸດແມ່ນ ມີການວາງແຜນໃຊ້ພູມປັນຍາທ້ອງຖິ່ນທີ່ມີປະໂຫຍດຕໍ່ການຮຽນຮູ້ຂອງນັກຮຽນ.

ດຳເນີນການໃຊ້ຫຼັກສູດ: ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນຢູ່ໃນລະດັບຫຼາຍເຊິ່ງໄດ້ແກ່ ມີການຈັດກິດຈະກຳທີ່ສົ່ງເສີມໃຫ້ນັກຮຽນເກີດຄວາມຮັກໃນດ້ານສິລະປະກິລາ ແລະ ການອອກແຮງງານ. ສ່ວນຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດໄດ້ແກ່ເຊີນຜູ້ມີຄວາມຮູ້ທາງພູມປັນຍາທ້ອງຖິ່ນແລະວິທະຍາກອນທ້ອງຖິ່ນມາຮ່ວມຈັດກິດຈະກຳການຮຽນຮູ້ສຳລັບນັກຮຽນ.

ການນິເທດ, ຕິດຕາມ,ແລະ ປະເມີນຜົນ: ຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນມີການປະເມີນຜົນການໃຊ້ຫຼັກສູດໃນທຸກພາກຮຽນ. ສ່ວນຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນພໍ່ແມ່, ຜູ້ປົກຄອງ ແລະຊຸມຊົນເຂົ້າມາມີສ່ວນຮ່ວມກິດຈະກຳການພັດທະນາຄຸນນະພາບການຮຽນ-ການສອນຂອງໂຮງຮຽນ.

2. ຜົນການປຽບທຽບຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນຕໍ່ການປະຕິບັດການບໍລິຫານຫຼັກສູດ ໂຮງຮຽນມັດທະຍົມສົມບູນໃນແຂວງເຊກອງ ໂດຍ ຈຳແນກຕາມຕຳແໜ່ງພົບວ່າ ບໍ່ແຕກຕ່າງກັນ. ຈຳແນກຕາມວຸດທິການສຶກສາພົບວ່າ: ຜູ້ທີ່ຈົບການສຶກສາລະດັບ ຊັ້ນສູງ ແລະ ປະລິນຍາຕີ ແມ່ນມີຄວາມຄິດເຫັນທີ່ແຕກຕ່າງກັນ. ຈຳແນກຕາມປະສົບການເຮັດວຽກ

ພົບວ່າ: ມີຄວາມຄິດເຫັນບໍ່ແຕກຕ່າງກັນ ແລະ ຈຳແນກຕາມທີ່ຕັ້ງຂອງໂຮງຮຽນພົບວ່າ: ໂດຍລວມແມ່ນມີຄວາມຄິດເຫັນບໍ່ແຕກຕ່າງກັນ.

3. ແນວທາງ ແລະ ຂໍ້ສະເໜີແນະກ່ຽວກັບການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນໃນແຂວງເຊກອງພົບວ່າ: ຜູ້ບໍລິຫານ ແລະ ຄູສອນ ຄວນ ສ້າງແຜນ ປັບປຸງ ແລະ ພັດທະນາຫຼັກສູດມັດທະຍົມສົມບູນ ໂດຍສະເພາະດ້ານການ ກວດກາ, ຕິດຕາມ ແລະ ປະເມີນຜົນຫຼັກສູດໃນແຕ່ລະໄລຍະ; ຜູ້ບໍລິຫານຄວນມີການເຜີຍແຜ່ປະຊາສຳພັນເພື່ອສ້າງຄວາມຮັບຮູ້, ຄວາມເຂົ້າໃຈ ໃຫ້ແກ່ຜູ້ປົກຄອງ, ຊຸມຊົນໃຫ້ເຫັນຄວາມສຳຄັນໃນການປະຕິບັດຫຼັກສູດ; ໂຮງຮຽນຄວນຈັດໃຫ້ມີສື່ການຮຽນຮູ້ນະວັດຕະກຳ, ແຫຼ່ງການຮຽນຮູ້ ແລະ ເທັກໂນໂລຊີ ທາງການສຶກສາໃຫ້ພຽງພໍຕາມຄວາມຕ້ອງການ; ໂຮງຮຽນຄວນເຊີນຜູ້ມີຄວາມຮູ້ພູມປັນຍາທ້ອງຖິ່ນ ແລະ ວິທະຍາກອນທ້ອງຖິ່ນມາຮ່ວມຈັດກິດຈະກຳການຮຽນຮູ້ສຳລັບນັກຮຽນ ແລະ ຄວນຈັດໃຫ້ມີການສຶກສາ,ວິທີການເພື່ອໃຫ້ ພໍ່ແມ່, ຜູ້ປົກຄອງເດັກ ແລະ ຊຸມຊົນເຂົ້າມາມີສ່ວນຮ່ວມໃນກິດຈະກຳພັດທະນາຄຸນນະພາບການຮຽນ-ການສອນ.

## 7. ຄວາມຮູ້ບຸນຄຸນ

ກ່ອນອື່ນຜູ້ຄົ້ນຄວ້າຂໍຕີລາຄາສູງ ແລະ ຮູ້ບຸນຄຸນມາຍັງຄູທີ່ປຶກສາ ທ່ານ ຣສ.ປອ. ຄຳແສງ ທະລັງສີ ແລະ ຜູ້ຊ່ວຍຄູທີ່ປຶກສາ ທ່ານ ປທ. ສອນເພັດ ສີສຸລາດ ແລະ ປທ.ພູມໃຈ ວົງວິໄລ. ທີ່ອຸທິດສະຕິປັນຍາ, ຄວາມພະຍາຍາມ ແລະ ເວລາອັນມີຄ່າຊ່ວຍແນະນຳເຮັດໃຫ້ການຂຽນວິທະຍານິພົນຂອງ ຂ້າພະເຈົ້າມີຜົນສຳເລັດສູງ.

ສຸດທ້າຍ, ຜູ້ຄົ້ນຄວ້າຂໍສະແດງຄວາມຮູ້ບຸນຄຸນມາຍັງພໍ່ແມ່, ຄອບຄົວພັນລະຍາ, ລູກ ແລະ ສັງຄົມເພື່ອນມິດຮັກແພງທີ່ໃຫ້ກຳລັງໃຈ ແລະ ໃຫ້ການສະໜັບສະໜູນຂ້າພະເຈົ້າສູ້ຊົນສຶກສາຮ່ຳຮຽນຈົນໄດ້ຮັບຜົນສຳເລັດໃນທຸກບາດກ້າວການສຶກສາຮ່ຳຮຽນໃນຕະຫຼອດສອງປີ ສະນັ້ນ, ຖ້າຫາກຂາດພາກສ່ວນ ແລະ ບຸກຄົນທີ່ສຳຄັນດັ່ງກ່າວມາ ຜູ້ຄົ້ນຄວ້າຄິດຈະບໍ່ຈົບການສຶກສາຄັ້ງນີ້ຢ່າງແນ່ນອນ.

## 8. ເອກະສານອ້າງອີງ

ກະຊວງສຶກສາທິການ. (1997). ຫຼັກສູດໂຮງຮຽນສາມັນ. ນະຄອນຫຼວງວຽງຈັນ: ໂຮງພິມສຶກສາ.

ກະຊວງສຶກສາທິການ ແລະ ກິລາ. (2001). ການພັດທະນາເສດຖະກິດ ແລະ ສັງຄົມປະເທດລາວ 2001-2020.ນະຄອນຫຼວງວຽງຈັນ: ໂຮງພິມກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2011). ຫຼັກສູດຊັ້ນມັດທະຍົມສຶກສາຕອນປາຍ. ນະຄອນຫຼວງວຽງຈັນ: ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ກະຊວງສຶກສາທິການໄທ (2546). ການສຶກສາຄວາມພ້ອມການໃຊ້ຫຼັກສູດການສຶກສາຂັ້ນພື້ນຖານ. ກຸງເທບ:ສຸກ ມາລາລາດພ້າວ,

ກິດຕິມາ ປີດີດີລົກ. (2532). ການບໍລິຫານ ແລະ ການນິເທດເບື້ອງຕົ້ນ. ກຸງເທບ: ໂຮງພິມອັກສອນພິພັດ. ການຈະນາ

ກົງສີ ສີສຸພັນ ແລະ ປະພັດ ຊານາຣັດ. (2010). ຫຼັກການພື້ນຖານການບໍລິຫານ ແລະ ຄຸ້ມຄອງໂຮງຮຽນມັດທະຍົມສຶກສາ, ນະຄອນຫຼວງວຽງຈັນ: ກົມຈັດຕັ້ງ ແລະ ພະນັກງານ, ກະຊວງສຶກສາທິການ ແລະ ກິລາ.

ເກດສຸດາ ເລັ່ງສະຫວັດ. (2014). ການບໍລິຫານຫຼັກສູດໂຮງຮຽນມັດທະຍົມສຶກສາໃນນະຄອນຫຼວງວຽງຈັນ. ນະຄອນຫຼວງວຽງຈັນ: ມະຫາວິທະຍາໄລແຫ່ງຊາດ ຄະນະສຶກສາສາດ.

ຄຳພິມາ ເຊື່ອມຈິດ. (2539). ການບໍລິຫານ

ຫລັກສູດໃນໂຮງຮຽນມັດທະຍົມສຶກສາຕອນຕົ້ນ ສັງກັດກົມມັດທະຍົມສຶກສາ ຈັງຫວັດເພັດບູລີ. ເພັດບູລີ: ມະຫາວິທະຍາໄລກະເສດສາດ.

ຈິນຕະນາ ທະນະວິບູໄຊ. (2546). ການຕິຕາມຜົນ ແລະ ການປະເມີນຜົນກະທົບຂອງຫຼັກສູດ, ແຂວງ ນົນທະບູ ລີ: ສໍານັກການພິມ ມະຫາວິທະຍາໄລສຸໂຂໄທທໍາມາທິລາດ.

ຈະຣຸນີ ເກົ້າອ້ຽນ. (2557). ເທັກນິກການບໍລິຫານງານວິຊາການໃນສະຖານສຶກສາກົນລະຍຸດ ແລະ ແນວທາງ ສໍາລັບຜູ້ບໍລິຫານມືອາຊີບ, ແຂວງສີງຂາ (ປະເທດໄທ): ຊານເມືອງການພິມ, ປະຕິບັດສໍາລັບຜູ້ບໍລິຫານມືອາຊີບ, ແຂວງສີງຂາ (ປະເທດໄທ): ຊານເມືອງການພິມ,

ໃຈທິບ ເຊື້ອລັດຕະນະພົງ. (2539). ການພັດທະນາຫຼັກສູດ ຫຼັກການ ແລະ ແນວທາງປະຕິບັດ. ກຸງເທບ: ໂຮງພິມຊະລິມເພັດ

ສະງັດ ອຸທານັນ. (2538). ພື້ນຖານ ແລະ ຫຼັກການພັດທະນາຫຼັກສູດ. ກຸງເທບ: ວົງເດືອນການພິມ. ສູນທອນ

ດໍາຣົງ ເໝືອນປະສາດ. (2546). ການບໍລິຫານຈັດການຫຼັກສູດສະຖານສຶກສາຂັ້ນພື້ນຖານໂຮງຮຽນຕົວແບບ ແລະໂຮງຮຽນເຄືອຄ່າຍສັງກັດຢູ່ສໍານັກງານກໍາມະການແຫ່ງຊາດ ເຂດການສຶກສາ 6. ກຸງເທບ: ມະຫາວິທະຍາ ໄລກະເສດສາດ.

ທັດສະນີ ທະຣານົນ. (2543). ການບໍລິຫານແລະຈັດການສຶກສາຕາມນະໂຍບານການປະຕິຮູບການສຶກສາ. ກຸງເທບ: ກອງວິເຄາະໂຄງການ ແລະ ປະເມີນຜົນສໍານັກງານຄະນະກໍາມະທິການແຫ່ງຊາດ.

ທໍາຣົງ ບົວສີ (2542). ທິດສະດີຫຼັກສູດການອອກແບບ ແລະ ການພັດທະນາ. ກຸງເທບ: ທະນະທັດການພິມ.

ປິຍາພອນ ວົງອານຸດຕະໂລດ. (2553). ການບໍລິຫານງານວິຊາການ. ກຸງເທບ: ບໍລິສັດ ພິມຕີ ຈໍາກັດ. ວັດສະລີ

ພະແນກສຶກສາທິການແລະກິລາແຂວງເຊກອງ. (2020). ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກ ສາສົກປີ 2019-2020 ແລະ ແຜນພັດທະນາການສຶກສາສົກປີ 2019-2020 ພະສຶກສາທິການແລະ ກິລາ ແຂວງເຊກອງ

ພິມາ ເຊື່ອມຈິດ. (2539). ການບໍລິຫານຫຼັກສູດໂຮງຮຽນມັດທະຍົມສຶກສາຕອນຕົ້ນ, ສັງກັດກົມສາມັນສຶກສາເພັດບູລີ. ກຸງເທບ: ມະຫາວິທະຍາໄລກະເສດສາດ.

ຕາຕາລາງ 1: ຜົນການວິເຄາະຂໍ້ມູນຄວາມຄິດເຫັນຂອງບຸກຄະລາກອນກ່ຽວກັບລະດັບການ ປະຕິບັດການ ບໍລິຫານຫຼັກກສູດໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງໂດຍພາບລວມຂອງແຕ່ລະດ້ານ

| ສະພາບການບໍລິຫານດ້ານຕ່າງໆ | | $\bar{X}$ | $S.D$ | ແປຜົນ |
|---|---|---|---|---|
| 1 | ດ້ານການກະກຽມຫຼັກສູດ | 4.00 | 0.67 | ຫຼາຍ |
| 2 | ດ້ານການກຳນົດ ແຜນບໍລິຫານຫຼັກສູດ | 4.07 | 0.66 | ຫຼາຍ |
| 3 | ດ້ານການດຳເນີນການໃຊ້ຫຼັກສູດ | 4.06 | 0.66 | ຫຼາຍ |
| 4 | ດ້ານການນິເທດ, ຕິດຕາມ ແລະ ປະເມີນຜົນ | 4.14 | 0.63 | ຫຼາຍ |
| | **ລວມ** | **4.06** | **0.65** | ຫຼາຍ |

ຕາຕາລາງ 2: ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ສະຖິຕິທີ່ໃຊ້ໃນການທົດສອບສົມມຸດຕິຖານຂອງ ລະດັບ ການປະຕິບັດການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງ ຈຳແນກຕາມຕຳແໜ່ງ

| ການປະຕິບັດການບໍລິຫານຫຼັກສູດ | | ຜູ້ບໍລິຫານ ໂຮງຮຽນ (n=38) | | ຄູສອນ (n=145) | | T-Test | P-value |
|---|---|---|---|---|---|---|---|
| | | $\bar{X}$ | **S.D** | $\bar{X}$ | **S.D** | | |
| 1 | ດ້ານການກະກຽມຫຼັກສູດ | 3.91 | 0.57 | 4.03 | 0.45 | - 1.42 | 0.15 |
| 2 | ດ້ານການກຳນົດແຜນບໍລິຫານ ຫຼັກສູດ | 3.99 | 0.50 | 4.10 | 0.43 | - 1.32 | 0.18 |
| 3 | ດ້ານການດຳເນີນການໃຊ້ ຫຼັກສູດ | 3.98 | 0.56 | 4.09 | 0.43 | - 1.20 | 0.23 |
| 4 | ດ້ານການນິເທດ, ຕິດຕາມ ແລະ ປະເມີນຜົນ | 4.13 | 0.48 | 4.15 | 0.41 | - 0.24 | 0.23 |
| | **ລວມ** | **4.00** | **0.51** | **4.09** | **0.40** | **- 1.20** | **0.23** |

ຕາຕາລາງ 3 ຄ່າສະຖິຕິການປຽບທຽບຄວາມແຕກຕ່າງຂອງການປະຕິບັດການບໍລິຫານຫຼັກສູດແຍກຕາມວຸດທິ ການສຶກສາຕໍ່ກັບດ້ານການກະກຽມຫຼັກສູດເປັນລາຍຄູ່ໂດຍວິທີຂອງເຊບເຟ (Scheffe)

| ວຸດທິການສຶກສາ | | ຄ່າສະເລ່ຍ $\bar{X}$ | ວຸດທິການສຶກສາ | | |
|---|---|---|---|---|---|
| | | | ຊັ້ນກາງ | ຊັ້ນສູງ | ປະລິນຍາຕີ |
| | | | 4.05 | 4.11 | 3.92 |
| 1 | ຊັ້ນກາງ | 4.05 | - | 0.06 | - 0.13 |
| 2 | ຊັ້ນສູງ | 4.11 | - 0.06 | - | - 0.19* |

| | | | | | |
|---|---|---|---|---|---|
| 3 | ປະລິມຍາຕິ | 3.92 | 0.13 | 0.19* | - |

ຕາຕາລາງ 4 ສະຖິຕິປຽບທຽບຄວາມແຕກຕ່າງຂອງການປະຕິບັດການບໍລິຫານຫຼັກສູດໂຮງຮຽນມັດທະຍົມສົມບູນພາຍໃນແຂວງເຊກອງໂດຍຈໍາແນກຕາມປະສົບການສອນ

| ລ/ດ | ເນື້ອໃນ | ສາມຕົວປ່ຽນ ລະຫວ່າງກຸ່ມ | Sum of Squares | df | Mean Square | F | Sig. |
|---|---|---|---|---|---|---|---|
| 1 | ດ້ານການກະກຽມຫຼັກສູດ | ລະຫວ່າງກຸ່ມ | 0.17 | 2 | 0.09 | 0.38 | 0.69 |
| | | ພາຍໃນກຸ່ມ | 41.65 | 180 | 0.23 | | |
| | | ລວມ | 41.82 | 182 | | | |
| 2 | ດ້ານການກໍານົດແຜນບໍລິຫານຫຼັກສູດ | ລະຫວ່າງກຸ່ມ | 0.14 | 2 | 0.07 | 0.34 | 0.71 |
| | | ພາຍໃນກຸ່ມ | 36.19 | 180 | 0.20 | | |
| | | ລວມ | 36.33 | 182 | | | |
| 3 | ດ້ານການດໍາເນີນການໃຊ້ຫຼັກສູດ | ລະຫວ່າງກຸ່ມ | 0.03 | 2 | 0.01 | 0.07 | 0.93 |
| | | ພາຍໃນກຸ່ມ | 37.90 | 180 | 0.21 | | |
| | | ລວມ | 37.93 | 182 | | | |
| 4 | ດ້ານການນິເທດ, ຕິດຕາມ ແລະ ປະເມີນຜົນ | ລະຫວ່າງກຸ່ມ | 0.59 | 2 | 0.29 | 1.63 | 0.20 |
| | | ພາຍໃນກຸ່ມ | 32.45 | 180 | 0.18 | | |
| | | ລວມ | 33.04 | 182 | | | |
| ລວມ | | ລະຫວ່າງກຸ່ມ | 0.13 | 2 | 0.06 | 0.35 | 0.70 |
| | | ພາຍໃນກຸ່ມ | 32.27 | 180 | 0.18 | | |
| | | ລວມ | 32.40 | 182 | | | |

ຕາຕາລາງ 5 ສະຖິຕິປຽບທຽບຄວາມແຕກຕ່າງຂອງການປະຕິບັດການບໍລິຫານຫຼັກສູດໂຮງຮຽນມັດທະຍົມພາຍໃນແຂວງເຊກອງໂດຍແນກຕາມທີ່ຕັ້ງຂອງໂຮງຮຽນຕໍ່ກັບການປະຕິບັດການບໍລິຫານ ຫຼັກສູດ

| ການປະຕິບັດການບໍລິຫານຫຼັກສູດ | | ໃນເທດສະບານເມືອງ (n=90) | | ນອກເທດສະບານເມືອງ (n=93) | | T-Test | P-value |
|---|---|---|---|---|---|---|---|
| | | $\bar{X}$ | S.D | $\bar{X}$ | S.D | | |
| 1 | ດ້ານການກະກຽມຫຼັກສູດ | 4.00 | 0.53 | 4.01 | 0.42 | - 0.13 | 0.89 |

| | | | | | | | |
|---|---|---|---|---|---|---|---|
| 2 | ດ້ານການກຳນົດແຜນ ບໍລິຫານຫຼັກສູດ | 4.09 | 0.50 | 4.07 | 0.39 | 0.31 | 0.75 |
| 3 | ດ້ານການດຳເນີນການ ໃຊ້ຫຼັກສູດ | 4.08 | 0.52 | 4.06 | 0.38 | 0.36 | 0.71 |
| 4 | ດ້ານການນິເທດ, ຕິດຕາມ ແລະ ປະເມີນຜົນ | 4.15 | 0.48 | 4.14 | 0.36 | 0.11 | 0.90 |
| | ລວມ | 4.08 | 0.49 | 4.07 | 0.35 | 0.17 | 0.86 |